ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0814/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 05/05/2020

ແຈ້ງການ

ຮຽນ: ທ່ານຜູ້ຖືຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງວາລະກອງປະຊຸມ, ວັນ-ເວລາ, ສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

- ອີງຕາມການຕົກລົງເຫັນດີຂອງປະທານບໍລິຫານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດ ແຈ້ງມາຍັງທ່ານເພື່ອຊາບດັ່ງນີ້:

1. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019, ມີລາຍລະອຽດດັ່ງນີ້:
   - ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.
   - ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018.
   - ວາລະທີ 3: ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2019 ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2019.
   - ວາລະທີ 4: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2019 ລວມທັງລາຍງານການເງິນຂອງບໍລິສັດ ປີ 2019 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2020.
   - ວາລະທີ 5: ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2019.
   - ວາລະທີ 6: ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2020-2022.
   - ວາລະທີ 7: ພິຈາລະນາ ແລະ ອະນຸມັດເປ້ຍປະຊຸມສະພາບໍລິຫານ, ກອງເລຂາສະພາບໍລິຫານ, ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານ.
   - ວາລະທີ 8: ພິຈາລະນາ ແລະ ຮັບຮອງເອົາສະພາບໍລິຫານຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບອາຍຸການ.
   - ວາລະທີ 9: ພິຈາລະນາ ແລະ ອະນຸມັດການດັດແກ້ກົດລະບຽບ ຂອງບໍລິສັດ ມາດຕາ 4 ວ່າດ້ວຍທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ, ມາດຕາ 09 ວ່າດ້ວຍ ຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

ແລະ (1) ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການກຳນົດລາຍລະອຽດ ແລະ ເງື່ອນໄຂຕ່າງໆທີ່ຈຳເປັນ ກ່ຽວກັບການກະກຽມເປີດກອງປະຊຸມສາ

ຖະໜົນມິດຕະພາບລາວ-ໄທ,ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນສປປລາວຕູ້ປ.ນ 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la

ມັນຜູ້ຖືຮຸ້ນ ປະຈຳປີ 2019 ໄດ້ທຸກປະການ, ລວມທັງໃຫ້ມີອຳນາດໃນການດຳເນີນການໃດໜຶ່ງ ອັນຈຳເປັນ ລວມທັງ ການກະກຽມເອກະສານຕ່າງໆ ແລະ ດຳເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ; ແລະ

(2) ກຳນົດຜູ້ຕາງໜ້າຜູ້ຖືຮຸ້ນໃນການຮັບໃບມອບສັນທະຄຶ: ທ່ານ ຮສ. ປອ. ກອງສີ ແສງມະນີ, ທ່ານ ສຈ. ປອ. ຄຳລືຊາ ນວນສະຫວັນ ແລະ ທ່ານ ຮສ. ຄຳເພີຍ ພົມມະຈັນ ສະມາຊິກສະພາບໍລິຫານອິດສະຫຼະ ເປັນຜູ້ຮັບ ມອບສັນທະຈາກຜູ້ຖືຮຸ້ນ.

2. ກຳນົດວັນປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ໃນວັນທີ 29 ພຶດສະພາ 2020 ເວລາ 15:00 ໂມງ ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບ ໝາຍຈາກ ຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນການແກ້ໄຂ ວັນ-ເວລາ ແລະ ສະຖານທີ່ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖື,

ຜູ້ອຳນວຍການໃຫຍ່

ລັດຕະນາ ປະທຸມວັນ

ຖະໜົນມິດຕະພາບລາວ-ໄທ,ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນສປປລາວຕູ້ປ.ນ 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la